ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ: 525 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2021

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດອັດຕາແລກປ່ຽນ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງເຫັນດີ ດັ່ງນີ້:**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບການກ່ຽວກັບການກຳນົດອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ໃຫ້ສອດຄ່ອງກັບກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ສ້າງເງື່ອນໄຂໃຫ້ລະບົບທະນາຄານສາມາດເຄື່ອນໄຫວບໍລິການແລກປ່ຽນເງິນຕາໄດ້ຢ່າງຄ່ອງຕົວ, ອັດຕາແລກປ່ຽນມີຄວາມສະຫງົບ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບດ້ານເງິນຕາ.

**ມາດຕາ 2 ການກຳນົດອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ**

ກົມນະໂຍບາຍເງິນຕາກຳນົດອັດຕາແລກປ່ຽນອ້າງອີງຂອງທະນາຄານແຫ່ງ ສປປ ລາວ ລະຫວ່າງເງິນກີບກັບເງິນໂດລາສະຫະລັດ ປະຈຳວັນ ແລະ ແຈ້ງອັດຕາແລກປ່ຽນອ້າງອີງດັ່ງກ່າວ ຜ່ານເວັບໄຊທ໌ຂອງທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 08:10 ໂມງເຊົ້າຂອງທຸກໆວັນລັດຖະການ ເພື່ອໃຫ້ບັນດາທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ນຳໃຊ້ເປັນບ່ອນອີງໃນການກຳນົດອັດຕາແລກປ່ຽນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ອີງໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາກຳນົດອອກ, ກົມບໍລິການທະນາຄານກຳນົດອັດຕາແລກປ່ຽນສຳລັບການຊື້ ແລະ ຂາຍເງິນກີບ ກັບ ເງິນໂດລາສະຫະລັດ, ເງິນບາດ, ເງິນຢວນ ແລະ ສະກຸນເງິນອື່ນໆ ພ້ອມທັງແຈ້ງອັດຕາແລກປ່ຽນຊື້-ຂາຍດັ່ງກ່າວຂອງຕົນ ຜ່ານເວັບໄຊທ໌ຂອງທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 08:30 ໂມງເຊົ້າຂອງທຸກໆວັນລັດຖະການ.

**ມາດຕາ 3 ການກຳນົດອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ເປັນເຈົ້າການກຳນົດອັດຕາແລກປ່ຽນລະຫວ່າງເງິນກີບກັບເງິນຕາຕ່າງປະເທດສະກຸນຕ່າງໆດ້ວຍຕົນເອງ ໃນແຕ່ລະວັນ ຕາມຫຼັກການດັ່ງນີ້:



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

1. ກໍານົດອັດຕາແລກປ່ຽນສໍາລັບການຊື້ ຫຼື ຂາຍເງິນກີບກັບເງິນໂດລາສະຫະລັດ ໄດ້ໃນຂອບເຂດບໍ່ເກີນ ±1,50% ທຽບໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາປະກາດອອກໃນແຕ່ລະວັນ ແລະ ສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍ ບໍ່ເກີນ 0,50%;
2. ກໍານົດໃຫ້ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 0,75% ສໍາລັບການແລກປ່ຽນເງິນກີບກັບເງິນເອີໂຣ ແລະ ເງິນກີບກັບເງິນບາດ;
3. ກໍານົດໃຫ້ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 2% ສໍາລັບການແລກປ່ຽນເງິນກີບກັບເງິນຢວນ ແລະ ເງິນຕາສະກຸນອື່ນໆ.

**ມາດຕາ 4 ການແຈ້ງອັດຕາແລກປ່ຽນໃຫ້ແກ່ມວນຊົນ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງແຈ້ງອັດຕາແລກປ່ຽນຂອງຕົນໃຫ້ມວນຊົນຊາບພາຍໃນເວລາ 09:00 ໂມງເຊົ້າ ຂອງແຕ່ລະວັນ, ກໍລະນີມີການປ່ຽນແປງລະຫວ່າງວັນ ຕ້ອງແຈ້ງອັດຕາແລກປ່ຽນທີ່ໄດ້ປັບປ່ຽນນັ້ນ ເປັນແຕ່ລະໄລຍະ ພາຍໃນວັນດັ່ງກ່າວ ຢ່າງເຄັ່ງຄັດ. ການແຈ້ງອັດຕາແລກປ່ຽນນັ້ນຕ້ອງປະຕິບັດໃນຮູບແບບທີ່ຊັດເຈນ ຈະແຈ້ງ ຢູ່ສະຖານທີ່ບໍລິການ, ເວັບໄຊທ໌ ແລະ ຜ່ານສື່ສັງຄົມຮູບແບບອື່ນໆຂອງຕົນ. ອັດຕາແລກປ່ຽນທີ່ແຈ້ງນັ້ນຕ້ອງຖືກຕ້ອງຕາມການຈັດຕັ້ງປະຕິບັດຕົວຈິງສໍາລັບທຸກທຸລະກໍາຂອງຕົນ.

**ມາດຕາ 5 ການລາຍງານໃຫ້ທະນາຄານແຫ່ງ ສປປ ລາວ**

ທະນາຄານທຸລະກິດມີໜ້າທີ່ລາຍງານປະຈໍາວັນກ່ຽວກັບສະພາບການເຄື່ອນໄຫວແລກປ່ຽນເງິນຕາຂອງຕົນ ແລະ ຮ້ານແລກປ່ຽນເງິນຕາຕົວແທນທີ່ຂຶ້ນກັບ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 16:00 ໂມງຂອງວັນດັ່ງກ່າວນັ້ນ ຢ່າງຊັດເຈນ ແລະ ຖືກຕ້ອງກັບສະພາບການຈັດຕັ້ງປະຕິບັດຕົວຈິງ. ຂໍ້ມູນສໍາລັບການລາຍງານປະກອບມີ ອັດຕາແລກປ່ຽນ, ມູນຄ່າການຊື້-ຂາຍເງິນຕາສໍາລັບແຕ່ລະຄູ່ສະກຸນເງິນ, ມູນຄ່າການຊື້-ຂາຍລວມທຸກສະກຸນເງິນ ແລະ ຂໍ້ມູນອື່ນໆຕາມແບບລາຍງານທີ່ທະນາຄານແຫ່ງ ສປປ ລາວ ກໍານົດອອກ ແຕ່ລະໄລຍະ.

**ມາດຕາ 6 ການກວດກາຕິດຕາມການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາມີໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງໃກ້ຊິດ ແລະ ເປັນປົກກະຕິ, ລາຍງານໃຫ້ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຊາບ ແຕ່ລະໄລຍະ, ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ທີ່ລະເມີດ ຢ່າງເຂັ້ມງວດ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງກ່ຽວກັບການກໍານົດອັດຕາແລກປ່ຽນອ້າງອີງລະຫວ່າງເງິນກີບກັບເງິນໂດລາສະຫະລັດ ແລະ ການກໍານົດອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ ສະບັບເລກທີ 801/ທຫລ, ລົງວັນທີ 05 ຕຸລາ 2015 ແລະ ລະບຽບການກ່ຽວຂ້ອງອື່ນ ທີ່ມີເນື້ອໃນຂັດກັບຂໍ້ຕົກລົງສະບັບນີ້.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສອນໄຊ ສິດພະໄຊ**